ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ:....779......./ທຫລ

ນະຄອນຫຼວງວຽງຈັນ, ວັນທີ 11 ຕຸລາ 2022

# ຂໍ້ຕົກລົງ

## ວ່າດ້ວຍການກຳນົດອັດຕາແລກປ່ຽນ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມຂໍ້ຕົກລົງວ່າດ້ວຍການບໍລິການແລກປ່ຽນເງິນຕາຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ ສະບັບເລກທີ 449/ທຫລ, ລົງວັນທີ 14 ມິຖຸນາ 2022.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດລະບຽບການກ່ຽວກັບການກຳນົດອັດຕາແລກປ່ຽນຂອງທະນາຄານແຫ່ງ ສປປ ລາວ, ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ ໃຫ້ສອດຄ່ອງກັບກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ, ສ້າງເງື່ອນໄຂໃຫ້ລະບົບທະນາຄານສາມາດເຄື່ອນໄຫວບໍລິການແລກປ່ຽນເງິນຕາໄດ້ຢ່າງຄ່ອງຕົວ ເພື່ອປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບເງິນຕາ.

**ມາດຕາ 2 ການກຳນົດອັດຕາແລກປ່ຽນຂອງທະນາຄານແຫ່ງ ສປປ ລາວ**

ກົມນະໂຍບາຍເງິນຕາກຳນົດອັດຕາແລກປ່ຽນອ້າງອີງ ລະຫວ່າງເງິນກີບກັບເງິນໂດລາສະຫະລັດ ປະຈຳວັນ ແລະ ແຈ້ງອັດຕາແລກປ່ຽນອ້າງອີງດັ່ງກ່າວ ຜ່ານເວັບໄຊທ໌ຂອງທະນາຄານແຫ່ງ ສປປ ລາວ ພາຍໃນເວລາ 8:10 ໂມງເຊົ້າຂອງທຸກໆວັນລັດຖະການ ເພື່ອໃຫ້ບັນດາທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ ນຳໃຊ້ເປັນບ່ອນອີງໃນການກຳນົດອັດຕາແລກປ່ຽນຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

ອີງໃສ່ອັດຕາແລກປ່ຽນອ້າງອີງທີ່ກົມນະໂຍບາຍເງິນຕາກຳນົດອອກ, ກົມບໍລິການທະນາຄານກຳນົດອັດຕາແລກປ່ຽນສຳລັບການຊື້ ແລະ ຂາຍເງິນກີບ ກັບເງິນໂດລາສະຫະລັດ ແລະ ເງິນຕາຕ່າງປະເທດສະກຸນອື່ນໆ ພ້ອມທັງແຈ້ງອັດຕາແລກປ່ຽນຊື້-ຂາຍດັ່ງກ່າວຂອງຕົນ ຜ່ານເວັບໄຊທ໌ຂອງທະນາຄານແຫ່ງ ສປປ ລາວ ພາຍໃນເວລາ 8:30 ໂມງເຊົ້າຂອງທຸກໆວັນລັດຖະການ.

ສຳລັບການກຳນົດອັດຕາແລກປ່ຽນໃນວັນພັກລັດຖະການ ແມ່ນໃຫ້ຖືເອົາອັດຕາແລກປ່ຽນອ້າງອີງຂອງທະນາຄານແຫ່ງ ສປປ ລາວ ທີ່ໄດ້ກຳນົດອອກຫຼ້າສຸດ ກ່ອນວັນພັກລັດຖະການເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ມາດຕາ 3 ການກຳນົດອັດຕາແລກປ່ຽນຂອງທະນາຄານທຸລະກິດ**

ທະນາຄານທຸລະກິດເປັນເຈົ້າການກຳນົດອັດຕາແລກປ່ຽນລະຫວ່າງເງິນກີບກັບເງິນຕາຕ່າງປະເທດສະກຸນຕ່າງໆດ້ວຍຕົນເອງ ໃນແຕ່ລະວັນ ຕາມຫຼັກການດັ່ງນີ້:

1. ກຳນົດອັດຕາແລກປ່ຽນສຳລັບການຊື້ ຫຼື ຂາຍເງິນກີບກັບເງິນໂດລາສະຫະລັດ ໄດ້ໃນຂອບເຂດບໍ່ເກີນ ±4,50% ທຽບໃສ່ອັດຕາແລກປ່ຽນອ້າງອີງທີ່ກົມນະໂຍບາຍເງິນຕາປະກາດອອກໃນແຕ່ລະວັນ ແລະ ສ່ວນຕ່າງລະຫວ່າງອັດຕາຊື້-ອັດຕາຂາຍ ບໍ່ເກີນ 1%;
2. ກຳນົດໃຫ້ສ່ວນຕ່າງລະຫວ່າງອັດຕາຊື້ ແລະ ອັດຕາຂາຍ ບໍ່ເກີນ 1% ສຳລັບການແລກປ່ຽນເງິນກີບກັບເງິນບາດ, ເງິນຢວນ ແລະ ເງິນເອີໂຣ.

**ມາດຕາ 4 ການກຳນົດອັດຕາແລກປ່ຽນຂອງຮ້ານແລກປ່ຽນເງິນຕາຕົວແທນ**

ຮ້ານແລກປ່ຽນເງິນຕາຕົວແທນຕ້ອງກຳນົດອັດຕາຊື້ເງິນໂດລາຂອງຕົນ ພາຍໃນຂອບ ±3% ທຽບກັບອັດຕາແລກປ່ຽນອ້າງອີງຂອງທະນາຄານແຫ່ງ ສປປ ລາວ; ກຳນົດອັດຕາຊື້ເງິນຕາຕ່າງປະເທດສະກຸນອື່ນໆ ບໍ່ເກີນຂອບອັດຕາແລກປ່ຽນຂອງທະນາຄານທຸລະກິດທີ່ຕົນຂຶ້ນກັບ ແລະ ສອດຄ່ອງກັບລະບຽບການອື່ນໆຂອງທະນາຄານແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດທີ່ຕົນຂຶ້ນກັບ. ຮ້ານແລກປ່ຽນເງິນຕາຕົວແທນບໍ່ໄດ້ຮັບອະນຸຍາດໃຫ້ຂາຍເງິນຕາຕ່າງປະເທດ.

**ມາດຕາ 5 ການແຈ້ງອັດຕາແລກປ່ຽນໃຫ້ແກ່ມວນຊົນ ແລະ ລາຍງານໃຫ້ທະນາຄານແຫ່ງ ສປປ ລາວ**

ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ ຕ້ອງແຈ້ງອັດຕາແລກປ່ຽນສຳລັບໃຫ້ບໍລິການແກ່ລູກຄ້າ ເປັນແຕ່ລະໄລຍະໃນລະຫວ່າງວັນທີ່ໃຫ້ບໍລິການຢູ່ສະຖານທີ່ບໍລິການ, ເວັບໄຊທ໌ ແລະ ຜ່ານຊ່ອງທາງໂຄສະນາເຜີຍແຜ່ຂໍ້ມູນຂ່າວສານອື່ນໆຂອງຕົນ ຢ່າງຊັດເຈນ ແລະ ຖືກຕ້ອງຕາມການຈັດຕັ້ງປະຕິບັດຕົວຈິງ.

ບັນດາທະນາຄານທຸລະກິດມີໜ້າທີ່ລາຍງານສະພາບການເຄື່ອນໄຫວແລກປ່ຽນເງິນຕາຂອງຕົນ ແລະ ຮ້ານແລກປ່ຽນເງິນຕາຕົວແທນທີ່ຂຶ້ນກັບຕົນ ເປັນປະຈຳວັນ ໃຫ້ແກ່ທະນາຄານແຫ່ງ ສປປ ລາວ ພາຍໃນເວລາ 16:00 ໂມງຂອງທຸກໆວັນລັດຖະການ ຢ່າງຄົບຖ້ວນ ແລະ ຖືກຕ້ອງກັບສະພາບການຈັດຕັ້ງປະຕິບັດຕົວຈິງ. ຂໍ້ມູນສຳລັບການລາຍງານປະກອບມີ ອັດຕາແລກປ່ຽນ, ມູນຄ່າການຊື້-ຂາຍເງິນຕາສຳລັບແຕ່ລະຄູ່ສະກຸນເງິນ, ມູນຄ່າການຊື້-ຂາຍລວມຂອງແຕ່ລະສະກຸນເງິນ ແລະ ຂໍ້ມູນອື່ນໆຕາມທີ່ທະນາຄານແຫ່ງ ສປປ ລາວ ໄດ້ກຳນົດໃນແບບເອກະສານລາຍງານທຸລະກຳແລກປ່ຽນເງິນຕາ ແຕ່ລະໄລຍະ.

**ມາດຕາ 6 ການກວດກາຕິດຕາມການຈັດຕັ້ງປະຕິບັດ**

ກົມນະໂຍບາຍເງິນຕາມີໜ້າທີ່ຕິດຕາມກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງໃກ້ຊິດ ແລະ ເປັນປົກກະຕິ, ລາຍງານໃຫ້ຄະນະຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຊາບ ແຕ່ລະໄລຍະ, ປະຕິບັດນະໂຍ ບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ທີ່ລະເມີດ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

**ມາດຕາ 7 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງວ່າດ້ວຍການກຳນົດອັດຕາແລກປ່ຽນ ສະບັບເລກທີ 525/ທຫລ, ລົງວັນທີ 15 ກັນຍາ 2021 ແລະ ລະບຽບການກ່ຽວຂ້ອງອື່ນ ທີ່ມີເນື້ອໃນຂັດກັບຂໍ້ຕົກລົງສະບັບນີ້. ⁄⁄⁄ -

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ
ຜູ້ວ່າການ

**ບຸນເຫຼືອ ສິນໄຊວໍລະວົງ**